ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---===000===---

ເລກທີ: 182 /ພກພ

ນະຄອນຫຼວງວຽງຈັນ, ວັນທີ: 25 APR 2025

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

- ອີງຕາມຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມລະບຽບ ຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008 /ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ທີ່ໄດ້ຈັດຂຶ້ນ ໃນວັນທີ 25 ເມສາ 2025 ເວລາ 09:15 ໂມງ, ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂດຍມີຜູ້ເຂົ້າຮ່ວມທັງໝົດ 21 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 05 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 16 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 553,019,500 ຮຸ້ນ, ເທົ່າກັບ 95.02% ຂອງຈຳນວນຮຸ້ນທັງໝົດຂອງ ບໍລິສັດ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານ ລາຍງານການເງິນ ປະຈຳປີ 2024 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ວາລະທີ 3: ພິຈາລະນາ ແລະ ຮັບຮອງ ການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2024

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພາພ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 95.02% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບບໍລິສັດ ແລະ ການຂຶ້ນທະບຽນວິສາຫະກິດໃໝ່ຂອງ ພາພ

ກອງປະຊຸມໄດ້ມີມະຕິເຫັນດີ ດ້ວຍຄະແນນສຽງ ດັ່ງນີ້:

- ເຫັນດີ: ຈຳນວນ 553,019,500 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 95.02% ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ;
- ບໍ່ເຫັນດີ: ຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ພຸລີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ແພງ ດວງເງິນ